

# ຮອຍຍິ້ມ ທີ່ບໍ່ມີກີ່ນເທົ້າລາ

ຣຸ່ງອະລຸນ ແດນອິໄລ

ຣຸ່ງອະລຸນ ແກບວິໄລ

# ຮອຍຍິ້ມ
# ທີ່ບໍ່ມີຄື່ມເຫຼົ້າ



ຈັດພິມໂດຍ
**ສຳນັກພິມອັກສອນສະລິນ**
**2004**

ໂຮມເລື່ອງສັ້ນ: ຮອຍຍິ້ມທີ່ບໍ່ມີກິ່ນເຫລົ້າ

ໂດຍ: ຮຸ່ງອະລຸນ ແດນວິໄລ

© ສະຫງວນລິຂະສິດ

ບັນນາທິການ:

ທອງໃບ ໂພທິສານ

ສົບສະຫວັນ ເຄື່ອງເທພາລິດ

ອອກແບບປົກ:

BP Book Design

ຈັດພິມ:

ສຳນັກງານວັນນະສິນ

ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

ຈັດຈຳໜ່າຍ:

ບ. ພອນສະຫວັນ ໂພທິສານ

ຮ້ານຈຳໜ່າຍປຶ້ມ "ວັນນະສິນ"

(VANNASIN Book Shop)

ຕັ້ງຢູ່ບໍລິເວນບ້ານພຸ, ນະຄອນຫລວງວຽງຈັນ

ໂທລະສັບ: (020) 5418375

ພິມຄັ້ງທີໜຶ່ງ ປີ 2004

ຈຳນວນພິມ 2.000 ຫົວ

ທະບຽນພິມ 21/ພຈ/26/12/2003

ພິມທີ່ ໂຮງພິມແຫ່ງລັດ .

# ສາລະບານ


| | | |
|---|---|---|
| • | ຄຳນຳ | 1 |
| 1 | ຮອຍຍິ້ມທີ່ບໍ່ມີກິ່ນເຫລົ້າ | 3 |
| 2 | ນ້ອງຍັງຄອຍ | 20 |
| 3 | ຊາຍຕົກລົດ | 29 |
| 4 | ສ້ອຍຫລົງຄໍ | 34 |
| 5 | ປີ້ນປອມ | 42 |
| 6 | ໃຜສອນລູກ | 48 |
| 7 | ສິ້ນໄຫມຜືນເກົ່າໆ | 55 |
| 8 | ສາວຂາຍຢາສູບ | 61 |
| 9 | ເຫລົ້າກັບຄົນ | 67 |
| 10 | ນາຫນ່າຍເຫມືອງ | 73 |
| • | ກ່ຽວກັບຜູ້ຂຽນ | 78 |

# ຄໍານໍາ

ປຶ້ມທີ່ທ່ານກໍາລັງອ່ານຢູ່ນີ້ ເປັນຫນຶ່ງໃນຈໍານວນປຶ້ມອ່ານວັນນະຄະດີ ທີ່ທາງສໍານັກພິມວັນນະສິນ ໄດ້ຈັດພິມຈໍາຫນ່າຍ ເພື່ອສະເຫນີເຂົ້າແຂ່ງຂັນລາງວັນ "ສີນໄຊ" ລາງວັນວັນນະກໍາສ້າງສັນດີເດັ່ນປະຈໍາປີ ຂອງວາລະສານວັນນະສິນ. ລາງວັນນີ້ ມີຈຸດປະສົງເພື່ອຈະມອບໃຫ້ແກ່ນັກປະພັນ, ນັກກະວີຜູ້ມີຜົນງານທາງດ້ານການປະພັນວັນນະຄະດີທີ່ສ້າງສັນ ແລະ ດີເດັ່ນທຸກໆປີ ເຊິ່ງໃນປີ 2004 ນີ້ຈະເລີ່ມແຂ່ງຂັນເປັນປີທໍາອິດ ແລະ ຈະປະກາດຜົນ ມອບລາງວັນຢ່າງເປັນທາງການ ໃນວັນທີ 5 ພະຈິກ 2004 ເຊິ່ງຄ້ອນພໍດີກັບວັນສ້າງຕັ້ງວາລະສານວັນນະສິນຄົບຮອບ 25 ປີ.

ທ່ານຜູ້ອ່ານ ສາມາດສົ່ງແຮງໃຈໃຫ້ຄະແນນສະຫນັບສະຫນູນຜົນງານຂອງນັກປະພັນທີ່ທ່ານຊື່ນຊອບ ໂດຍການສົ່ງຄໍາຄິດຄໍາເຫັນຂອງທ່ານ ໄປຍັງສໍານັກພິມຂອງພວກເຮົາ ກ່ຽວກັບເນື້ອໃນ ແລະ ສິລະປະການປະພັນທີ່ໂດດເດັ່ນ ເປັນຄຸນຄ່າທາງດ້ານວັນນະກໍາທີ່ສ້າງສັນ.

ຄຳເຫັນຂອງທ່ານຜູ້ອ່ານ ແມ່ນຈະໄດ້ຖືກຮັບຮອງເປັນຄະແນນປະກອບສ່ວນທີ່ສຳຄັນຍິ່ງໃຫ້ແກ່ການຕັດສິນລາງວັນຂອງຄະນະກຳມະການ.

ປຶ້ມວັນນະຄະດີທີ່ຈັດພິມຂຶ້ນໃນຊຸດນີ້ ລ້ວນແຕ່ໄດ້ຮັບການເລືອກສັນກັ່ນກອງມາຈາກນັກປະພັນ ແລະ ນັກກະວີຜູ້ມີຊື່ສຽງ ມີຜົນງານມາກມາຍ ໃນວົງການວັນນະກຳຂອງລາວເຮົາປັດຈຸບັນ. ດ້ວຍຄວາມຮັກ ຄວາມສັດທາ ແລະ ຄວາມມຸ່ງໝັ້ນ ທີ່ຢາກສ້າງສັນວົງການນັກປະພັນລາວ ໃຫ້ມີຄວາມກ້າວໜ້າຂະຫຍາຍຕົວ ແລະ ສົ່ງເສີມບົດບາດຂອງນັກຂຽນລາວ ໃຫ້ພົ້ນເດັ່ນໃນສັງຄົມຄືກັບບາງປະເທດໃນໂລກ. ດັ່ງນັ້ນສຳນັກພິມວັນນະສິນຈຶ່ງໄດ້ ທຸ້ມເທແຮງກາຍ ແຮງໃຈເຫື່ອແຮງ ສະຕິປັນຍາ ແລະ ຄວາມສາມາດ ເຂົ້າໃສ່ການຈັດທຳ ແລະຈັດພິມປຶ້ມວັນນະຄະດີຊຸດນີ້ ອອກສູ່ສາຍຕາຜູ້ອ່ານ ແລະ ພວກເຮົາກໍຫວັງເປັນຢ່າງຍິ່ງວ່າ ຈະໄດ້ຮັບການສະໜັບສະໜູນ ແລະ ເປັນແຮງໃຈຈາກຜູ້ອ່ານທຸກໆທ່ານມານະທີ່ນີ້ດ້ວຍ.

**ທອງໃບ ໂພທິສານ**
ຫົວໜ້າອຳນວຍການ ແລະ ບັນນາທິການ
ເລຂາທິການສະມາຄົມນັກປະພັນລາວ

# ຮອຍຍິ້ມທີ່ບໍ່ມີກິ່ນເຫລົ້າ

ເດືອນຕຸລາ ປີ 2001 ສະຖາບັນພາສາ ແລະ ວັນນະຄະດີຂອງມາເລເຊຍ ໄດ້ເຊີນຄະນະຜູ້ແທນນັກຂຽນຈາກສິບປະເທດອາຊຽນ ເຂົ້າຮ່ວມກອງປະຊຸມນັກຂຽນອາຊຽນຄັ້ງທຳອິດ ທີ່ຈັດຂຶ້ນຢູ່ມາເລເຊຍ.

ຄະນະນັກຂຽນລາວ ປະກອບດ້ວຍ ເອື້ອຍດາລາ ກັນລະຍາ ( ດວງຈຳປາ ), ອ້າຍເນັ່ງ ໄຊຫວ່າງ, ອ້າຍສິມແສງ ເກສາວິລະ, ອ້າຍສິມ ພະໄຊຍະມຸງຄຸນ ( ສາຍັນ ດົງແດງ ) ແລະ ຂ້ອຍໄດ້ເຂົ້າຮ່ວມຕາມຄຳເຊີນ.

ຄືນໜຶ່ງ ທີ່ໂຮງແຮມຄາວ ພຼີນເຊດ ໃນກົວລາລຳເປີ ປະເທດມາເລເຊຍ.

ກ່ອນຈະນອນ ຂ້ອຍຈັບເອົາແຜນການເຄື່ອນໄຫວຂອງຄະນະຜູ້ແທນກອງປະຊຸມມາເບິ່ງ ຂ້ອຍຕົກໃຈວາບທັນທີ ເມື່ອອ່ານໄປຮອດບ່ອນວ່າ " ໄປຮ່ວມພິທີກິນດອງຂອງຊາວມາເລ "

ຂ້ອຍຟ້າວໂທລະສັບໄປຫາຫົວໜ້າຄະນະທັນທີ

" ອາໂລ... ນີ້ແມ່ນເນັ່ງ ໄຊຫວ່າງ ເວົ້າ !"

" ເອີ້... ອ້າຍເນັ່ງ ນ້ອງນາ... ໂອທອງນາ "

" ອ້າວ... ໂອຍັງບໍ່ທັນນອນເທື່ອຫວະ ? "

" ຍັງ ! ນ້ອງພວມເບິ່ງແຜນການເຄື່ອນໄຫວໃນມື້ອື່ນ ຢູ່ !"

" ແລ້ວ ມີບັນຫາຫຍັງຫວະນ້ອງ ?"

" ຄືວ່າ... ເອີ... ມື້ອື່ນ ນ້ອງບໍ່ໄປຮ່ວມພິທີກິນດອງກະຊິໄດ້ຕິເບາະ ?"

" ອ້າວ... ເປັນຫຍັງນ້ອງ ?"

" ບໍ່ເປັນຫຍັງດອກ ນ້ອງກິນເຫລົ້າບໍ່ໄດ້ນາ !"

" ກິນບໍ່ໄດ້ ກະບໍ່ກິນຕີນ້ອງ "

" ຢ້ານເພິ່ນຊິຫາວ່າລັງກຽດທັ້ນເດລະ ພວກເຮົາບໍ່ຮູ້ຮີດຄອງຂອງເພິ່ນດີ ບໍ່ຮູ້ວ່າ ກ້າບໍ່ກິນເຫລົ້ານຳເພິ່ນຈະເຮັດໃຫ້ເພິ່ນເສຍໃຈຫລືບໍ່ ?"

"ໂອ້ຍ ຈັ່ງໃດກໍ່ຕ້ອງໄປຫັ້ນລະນ້ອງເອີຍ ບໍ່ຮູ້ກໍ່ຄ່ອຍໆຮູ້ໄປຫັ້ນລະ ! ກ້ານ້ອງບໍ່ໄປກໍ່ບໍ່ຮູ້ວ່າຊິໃຫ້ອ້າຍລາຍງານຄະນະຮັບຜິດຊອບກອງປະຊຸມວ່າຈັ່ງໃດ ?"

"ອ້າຍບອກວ່າ ນ້ອງບໍ່ສະບາຍກະໄດ້"

"ບອກແນວນັ້ນບໍ່ໄດ້ດອກ ເຂົາເຈົ້າຊໍ້າຊິເອົາລົດມາຮັບໄປໂຮງໝໍ ຜັດຊິຫຍຸ້ງອີກ ຈັ່ງໃດກໍ່ຕ້ອງໄປ ໄປຮອດພຸ້ນຈຶ່ງຄ່ອຍແກ້ໄຂຕາມຫລັງ"

ຄືນນັ້ນ ຂ້ອຍນອນບໍ່ຫລັບ ຄິດເຫັນອະດີດຕອນໄປກິນດອງຢູ່ບ້ານ ຍ້ອນຂືນສັດທາເຈົ້າພາບບໍ່ໄດ້...

ຕອນແລງຂອງມື້ໜຶ່ງ ທີ່ເຮືອນຂອງຂ້ອຍ ໃນກຳແພງນະຄອນວຽງຈັນ ປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ຫລັງຈາກຂ້ອຍກັບມາແຕ່ຫ້ອງການ ບົວລີເພື່ອນຮັກແພງກັບຂ້ອຍແຕ່ຕອນຮຽນຢູ່ມະຫາວິທະຍາໄລແຫ່ງຊາດມາຫາ ເຂົາຍື່ນບັດເຊີນໃຫ້ຂ້ອຍ ແລ້ວບອກວ່າ:

"ໂຕຕ້ອງໄປແທ້ໆ ກ້າໂຕບໍ່ໄປ ກືວ່າໂຕປະໂຕກຶ້ມເຮົາ"

ຕອນແລງຂອງມື້ຕໍ່ມາ ຫລັງຈາກປ່ອນບັດເຊີນ

24/VII

ເຂົ້າ ໃນກ່ອງຮູບຫົວໃຈແລ້ວ ກໍ່ມີນາງສາວເຫຍັ້ນເຫລົ້າ ໃຫ້ກິນ ແບບປະຕິເສດບໍ່ໄດ້ ນາງສົ່ງຮອຍຍິ້ມຫວານ ແລະ ກ່າວວ່າ:

" ເຊີນອ້າຍເຂົ້າໄປໃນເຮືອນພຸ້ນ "

ຢູ່ໃນເຮືອນ ມີພາຂວັນຕັ້ງຢູ່ເຄິ່ງກາງ ແລະ ມີຜູ້ເຖົ້າ ຜູ້ແກ່ຈັດຫັ້ນແປງນີ້ຢູ່ ພາຂວັນປະດັບດ້ວຍດອກຮັກສີຂາວ ເຊິ່ງເປັນຕົວແທນໃຫ້ແກ່ຄວາມຮັກອັນບໍລິສຸດ ແລະ ດອກ ດາວເຮືອງສີເຫລືອງ ເປັນຕົວແທນໃຫ້ແກ່ ຄວາມຮຸ່ງ ເຮືອງເຫລືອງເຫລື້ອມ ແລະ ທີ່ຂາດບໍ່ໄດ້ກໍ່ຄືຝ້າຍຜູກແຂນ ສີຂາວ ອັນສະແດງເຖິງຄວາມຮັກແພງສາມັກຄີ ມີອາຍຸ ໝັ້ນຂວັນຍືນ ນອກຈາກນັ້ນຍັງມີໄຂ່ຕົ້ມ ໄກ່ຕົ້ມ ແລະ ເຂົ້າຕົ້ມ ເຂົ້າໜົມ ນຳອີກ.

ມີສຽງເພງດັງຂຶ້ນວ່າ "... ແມ່ເຖົ້າເອີຍລູກເຂີຍມາ ແລ້ວ ແມ່ເຖົ້າແກ້ວຊ່ອຍເປີດປະຕູໃຫ້ແດ່ ມື້ສົມວັນດີ ເພື່ອນຝູງ ແລະ ເຖົ້າແກ່ ພ້ອມພາກັນແຫ່ລູກເຂີຍແມ່ ສົ່ງມາ..."

ຂ້ອຍຍ່າງອອກມາທາງນອກ ແນມເຫັນສຽວບົວ ລີນຸ່ງເສື້ອແພໃຫມມ້ອນ ນຸ່ງຜ້າເຫນັບຕ່ຽວ ບ່າພາຍກົງ ແລະ ພາຍວ້າວ ມີກິຫຽນທີ່ໄຕ້ຢູ່ ມີຜູ້ກັ້ງຄັນຮົ່ມໃຫ້ ມີ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ